ການປຶກສາຫາລືເບື້ອງຕົ້ນກັບຜູ້ທີ່ຈະຂໍທຶນ

↓

ຜູ້ທີ່ຈະຂໍທຶນ ມີການຈັດຕັ້ງທີ່ເໝາະສົມບໍ? → ບໍ່ມີ → ຄຳເຫັນຂອງ ກປສ ກ່ຽວກັບການຈັດຕັ້ງທີ່ເໝາະສົມ

↓ ມີ

ຮ່າງໂຄງການ, ຖ້າຂໍມາກໍໃຫ້ການຊ່ວຍເຫຼືອໃນການຮ່າງໂຄງການ ← ໃຫ້ການຊ່ວຍເຫຼືອໃນການສ້າງບົດສະເໜີ

↓

ຍື່ນຄຳຮ້ອງ

↓

ກັ່ນກອງເບື້ອງຕົ້ນແລະພິຈາລະນາບົດສະເໜີ ບົດສະເໜີໄດ້ຕາມເງື່ອນໄຂບໍ? → ບໍ່ໄດ້

↓ ມີ

ຜູ້ຈັດການຮັບຮອງ ບົດສະເໜີນັ້ນ ມີສິດໄດ້ຮັບທຶນບໍ? → ບໍ່ມີ → ພິຈາລະນາແລະຮັບຮອງໂດຍຄະນະຊີ້ນຳໂຄງການແລະທະນາຄານໂລກ ← ບໍ່ໄດ້

↓ ໄດ້

ວາງແຜນເພື່ອໃຫ້ທຶນແລະຈັດຕັ້ງປະຕິບັດ ← ໄດ້

↓

ກະກຽມແລະເຊັນສັນຍາກັບຜູ້ຂໍທຶນ

CBI

# ກອງທຶນປົກປັກຮັກສາສິ່ງແວດລ້ອມ

**ໂຄງການ ສິ່ງແວດລ້ອມແລະສັງຄົມ ຢູ່ ສປປ ລາວ**

ບົດແນະນຳເພື່ອກະກຽມບົດສະເໜີຂໍທຶນ
ຈາກບ້ວງ 'ລົງທຶນແກ່ຊີວະນາໆພັນ ແລະ ຊຸມຊົນ

CBI

## ພາກສະເໜີ

ກອງທຶນປົກປັກຮັກສາສິ່ງແວດລ້ອມ (ກປສ) ໄດ້ສ້າງຕັ້ງກອງທຶນຍ່ອຍ ຫຼື ບ້ວງສະໜອງທຶນສະເພາະ "ລົງທຶນແກ່ຊີວະນາໆພັນແລະຊຸມຊົນ" ເພື່ອສະໜັບສະໜູນ ຈຸດປະສົງຂອງຕົນໃນ "ການສ້າງຄວາມເຂັ້ມແຂງໃນການຄຸ້ມຄອງສິ່ງແວດລ້ອມ ແລະ ສັງຄົມ ທີ່ຕິດພັນກັບບັນຫາ ການນຳໃຊ້ຊັບພະຍາກອນທຳມະຊາດ ຢູ່ສປປ ລາວ ເພື່ອຮັບປະກັນຄຸນນະພາບຂອງການເຕີບໂຕທາງດ້ານເສດຖະກິດ ແລະ ຫຼຸດຜ່ອນ ຄວາມທຸກຍາກໃຫ້ໄດ້ດີຂຶ້ນ. ຈາກກອງທຶນຍ່ອຍດັ່ງກ່າວ, ກປສ ແນໃສ່ ສະໜັບສະໜູນກິດຈະກຳ ແລະ ແຜນການຕ່າງໆ ຢູ່ສາມແຂວງ ເປົ້າໝາຍ (ບໍລິຄຳໄຊ, ຄຳມ່ວນ ແລະ ສະຫັວນນະເຂດ) ເພື່ອ:

- ☞ສ້າງຄວາມເຂັ້ມແຂງໃນຄຸ້ມຄອງ ປ່າສະຫງວນ ແລະ ຮັບປະກັນຊີວິດການເປັນຢູ່ ຂອງຊຸມຊົນ ທີ່ຂຶ້ນກັບປ່າສະຫງວນຍືນຍົງຂຶ້ນ;
- ☞ລົງທຶນເຂົ້າໃນກິດຈະການປັບປຸງສິ່ງແວດລ້ອມຢູ່ຮາກຖານ ຂອງຊຸມຊົນ ທີ່ທຸກຍາກ ໂດຍແນໃສ່ການອະນຸລັກຊີວະນາໆພັນ, ການຄຸ້ມຄອງສິ່ງແວດລ້ອມຂອງຊຸມຊົນ, ປັບປຸງຊີວິດການເປັນຢູ່ແລະການສົ່ງເສີມການທ່ອງທ່ຽວທຳມະຊາດ.

ກອງທຶນຍ່ອຍດັ່ງກ່າວ ໄດ້ຮັບການສະໜັບສະໜູນຈາກລັດຖະບານ ສປປລາວ ແລະ ທະນາຄານໂລກ ແລະ ເປັນສ່ວນໜຶ່ງຂອງໂຄງການສິ່ງແວດລ້ອມ ແລະ ສັງຄົມ ຢູ່ສປປລາວ (ຄສລ).

## ຂັ້ນຕອນຂອງການສະເໜີຂໍທຶນ

ການສະເໜີຂໍທຶນ ທັງຂະໜາດໃຫຍ່ ແລະ ນ້ອຍ ສາມາດຍື່ນຫາໜ່ວຍງານຄຸ້ມຄອງໂຄງການ ໄດ້ທຸກເວລາລັດຖະການ. ຜູ້ຂໍທຶນຂະໜາດນ້ອຍ ສາມາດຍື່ນຄຳຮ້ອງ ຕາມແບບຟອມມາດຕະຖານ ໄດ້ນຳຜູ້ອຳນວຍຄວາມສະດວກຂອງໂຄງການໃນແຕ່ລະແຂວງ ເພື່ອພິຈາລະນາເບື້ອງຕົ້ນ ແລະໃຫ້ຄຳເຫັນ. ພາຍຫຼັງປຶກສາຫາລືແລ້ວ ກໍ່ອາດສົ່ງຫາໜ່ວຍງານຄຸ້ມຄອງໂຄງການເພື່ອກັ່ນກອງ. ຖ້າບົດສະເໜີຫາກຍັງບໍ່ໄດ້ຕາມເງື່ອນໄຂພື້ນຖານ, ຜູ້ສະເໜີກໍ່ສາມາດ ຂໍການຊ່ວຍເຫຼືອດ້ານວິຊາການ ຈາກຜູ້ອຳນວຍຄວາມສະດວກ ຂອງໂຄງການຢູ່ແຂວງຕົນເອງ ມາປັບປຸງ ແລ້ວກໍ່ສາມາດຍື່ນບົດນັ້ນຄືນໃໝ່.

ການສະເໜີຂໍທຶນຂະໜາດໃຫຍ່ ຕ້ອງເຮັດຕາມບົດແນະນຳມາດຕະຖານ, ແຕ່ບໍ່ກຳນົດຄວາມຍາວຂອງບົດ. ບົດສະເໜີຂໍທຶນຂະໜາດໃຫຍ່ ຈະມີການພິຈາລະນາຈາກຄະນະກວດກາພິເສດ ຢ່າງໜ້ອຍສອງທ່ານ ແລະ ຄະນະຊີ້ນຳໂຄງການເປັນຜູ້ຕົກລົງອະນຸມັດ.

ຖ້າບຸກຄົນໃດ ຫຼື ອົງການໃດມີຄວາມສົນໃຈຢາກສະເໜີຂໍທຶນແມ່ນ ສາມາດສອບຖາມເອົາລາຍລະອຽດໄດ້ຕື່ມຈາກໜ່ວຍງານຄຸ້ມຄອງໂຄງການ ເພື່ອໃຫ້ໄດ້ຮັບທຶນນັ້ນ. ການໃຫ້ທຶນຊ່ວຍເຫຼືອລ້າຈະໄດ້ມີການຕິດຕາມກວດກາໃຫ້ໄດ້ຕາມມາດຕະຖານທີ່ໄດ້ລະບຸໄວ້ ໃນສັນຍາຊ່ວຍເຫຼືອລ້າທີ່ຈະໄດ້ເຊັນກັນ ລະຫວ່າງ ກປສ ແລະ ຜູ້ຂໍທຶນ.

## ກິດຈະກຳທີ່ບໍ່ສະໜັບສະໜູນ

ຜູ້ຂໍທຶນຕ້ອງຮັບຮູ້ວ່າ ບາງກິດຈະກຳຈະບໍ່ໄດ້ຮັບການສະໜັບສະໜູນ ດ້ານທຶນຮອນ ຈາກບ້ວງສະໜອງທຶນດັ່ງກ່າວເຊິ່ງລວມມີ:

☞ ກິດຈະກຳໃດໜຶ່ງ ທີ່ຈຳເປັນຕ້ອງເຮັດການປະເມີນຜົນກະທົບດ້ານສິ່ງແວດລ້ອມຢ່າງຮອບດ້ານ ພາຍໃຕ້ລະບຽບກົດໝາຍ ຂອງ ສປປລາວ ແລະ ທະນາຄານໂລກ;

☞ ກິດຈະກຳຕ່າງໆ ທີ່ມີການເວນຄືນທີ່ດິນ, ການທຳລາຍຊັບສິນ ຫຼື ມີການຍົກຍ້າຍຈັດສັນປະຊາຊົນ;

☞ ການຈັດຊື້ອຸປະກອນຂະໜາດໃຫຍ່ເຊັ່ນ: ພາຫະນະ (ລົດເກງ, ລົດກະບະ, ອື່ນໆ), ສິນຄ້າ ແລະ ອຸປະກອນຕ່າງໆ;

☞ ວຽກກໍ່ສ້າງຂະໜາດໃຫຍ່;

☞ ບັນດາກິດຈະກຳ ທີ່ມີຜົນກະທົບທີ່ຮ້າຍແຮງຕໍ່ທຸລະກິດ, ອາຊີບ, ວຽກງານ, ທີ່ຢູ່ອາໄສຂອງຄົນ, ຖິ່ນອາໄສຂອງສັດ ຫຼື ມາດຕະຖານ ການດຳລົງຊີວິດຂອງ ປະຊາຊົນບັນດາເຜົ່າ;

☞ ການພັດທະນາບ້ານ ທີ່ເປັນການທຳລາຍສິ່ງແວດລ້ອມ ແລະ ການອະນຸລັກທຳມະຊາດອັນສຳຄັນ.

## ຂອບເຂດຂອງການສະໜອງທຶນ

ທຶນຊ່ວຍເຫຼືອລ້າ ຈະໃຫ້ໄດ້ກໍ່ຕໍ່ເມື່ອໄດ້ຮັບ : (1) ການພິຈາລະນາ ແລະ ເຫັນດີຮັບຮອງເອົາບົດສະເໜີ ໂດຍ ກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ (2) ທຶນຮອນຂອງກອງທຶນຍ່ອຍດັ່ງກ່າວຍັງເຫຼືອຢູ່. ເພື່ອຮັບປະກັນວ່າບົດສະເໜີຂໍທຶນນັ້ນ ຈະຕ້ອງປະກອບສ່ວນ ເຮັດໃຫ້ຈຸດປະສົງຂອງບ້ວງດັ່ງກ່າວບັນລຸໄດ້, ຈຶ່ງໄດ້ວາງມາດຕະຖານ ພື້ນຖານໃນການຄັດເລືອກ ດັ່ງນີ້:

☞ ສອດຄ່ອງກັບຍຸດທະສາດແຫ່ງຊາດ ວ່າດ້ວຍຊີວະນາໆພັນແຕ່ນີ້ ເຖິງປີ 2020 ແລະ ແຜນດຳເນີນງານ ຮອດປີ 2010 (ເດືອນ ມິຖຸນາ 2004);

☞ ສອດຄ່ອງກັບເປົ້າໝາຍລວມ ໃນການອະນຸລັກ ແລະ ການຄຸ້ມຄອງສິ່ງແວດລ້ອມ ແລະ ການພັດທະນາຊຸມຊົນ, ຢູ່ໃນ ແລະ ອ້ອມແອ້ມປ່າສະຫງວນ ຢູ່ພາກກາງຂອງລາວໃຫ້ເຂັ້ມແຂງ;

☞ ຊອກຮູ້ ແລະ ສັງລວມເອົາ ບັນດາບູລິມະສິດໃນການອະນຸລັກ ຢູ່ລະດັບທ້ອງຖິ່ນ ແລະ ພາກພື້ນເຂົ້ານຳ;

☞ ອົງການສະເໜີຂໍທຶນຈັດຕັ້ງປະຕິບັດ ຕ້ອງສະແດງໃຫ້ເຫັນຈະແຈ້ງວ່າຈະໃຫ້ເວລາແກ່ພະນັກງານ ແລະ ທຶນຮອນ ທີ່ເໝາະສົມເຂົ້າໃນການຈັດຕັ້ງປະຕິບັດໂຄງການຍ່ອຍ ເພື່ອຮັບປະກັນໃຫ້ການຈັດຕັ້ງປະຕິບັດໄດ້ຮັບຜົນສຳເລັດ;

☞ ລະບຸຜົນສຳເລັດ - ຜົນໄດ້ຮັບໃຫ້ຈະແຈ້ງ ແລະ ສາມາດປະເມີນຜົນໄດ້;

☞ ມີການສຶກສາຄວາມເປັນໄປໄດ້ ໃນການບັນລຸຜົນສຳເລັດ ຈາກທຶນຮອນທີ່ຂໍໄປ;

☞ ຂະໜາດຂອງໂຄງການທີ່ສະເໜີມາ ຕ້ອງຢູ່ບົນພື້ນຖານຄວາມຮັບຮູ້ ແລະ ລວມເອົາບົດຮຽນທີ່ຖອດຖອນໄດ້ ຈາກວຽກງານຜ່ານມາ ຢູ່ສປປ ລາວ ກໍ່ຄືຢູ່ໃນເຂດອາຊີຕາເວັນອອກສ່ຽງໃຕ້;

☞ ຂະໜາດຂອງໂຄງການທີ່ສະເໜີມາ ຈະສາມາດເພີ່ມມູນຄ່າ ໂດຍລະດົມທຶນຮອນເພີ່ມເຕີມ ຈາກບ່ອນອື່ນໄດ້.

## ລະບົບການສະໜອງທຶນ

ໂດຍຜ່ານບ້ວງ 'ລົງທຶນແກ່ຊີວະນາໆພັນ ແລະ ຊຸມຊົນ', ກປສ ໄດ້ກຳນົດທຶນຊ່ວຍເຫຼືອ ສອງປະເພດດັ່ງນີ້:

☞ ທຶນຊ່ວຍເຫຼືອລ້າຂະໜາດນ້ອຍ (ບໍ່ເກີນ 10.000 ໂດລາ): ເປົ້າໝາຍ ຂອງທຶນປະເພດນີ້ ແມ່ນແນໃສ່ສະໜັບສະໜູນກິດຈະກຳຂະໜາດນ້ອຍ ໃນການສ້າງຄວາມເຂັ້ມແຂງ ເຂົ້າໃນການຄຸ້ມຄອງປ່າສະຫງວນ ແລະ ຍົກລະດັບຊີວິດ ການເປັນຢູ່ຂອງປະຊາຊົນ ໃນການນຳໃຊ້ຊັບພະຍາກອນທຳມະຊາດແບບຍືນຍົງ;

☞ ທຶນຊ່ວຍເຫຼືອລ້າ ຂະໜາດໃຫຍ່ (ເກີນ 10.000 ໂດລາ): ທຶນປະເພດນີ້ແນໃສ່ສະໜັບສະໜູນກິດຈະກຳໃຫຍ່ກວ່າເຊັ່ນວ່າ: ການຄຸ້ມຄອງປ່າສະຫງວນ, ການຄົ້ນຄ້ວາ, ກິດຈະກຳເຜີຍແຜ່ ແລະ ການທ່ອງທ່ຽວທຳມະຊາດແບບຍືນຍົງ.

## ການຈັດຕັ້ງ

ກອງທຶນປົກປັກຮັກສາສິ່ງແວດລ້ອມ (ກປສ) ໄດ້ຖືກສ້າງຕັ້ງຂຶ້ນໃນປີ 2005 ໂດຍເປັນອົງການທີ່ກຸ້ມຕົນເອງທາງດ້ານການເງິນ ແລະ ການບໍລິຫານ, ເພື່ອແນໃສ່ເປົ້າໝາຍສ້າງຄວາມເຂັ້ມແຂງ ໃນການປົກປັກຮັກສາສິ່ງແວດລ້ອມ, ການຄຸ້ມຄອງຊັບພະຍາກອນທຳມະຊາດແບບຍືນຍົງ, ການປົກປັກຮັກສາຊີວະນາໆພັນ ແລະ ການພັດທະນາຊຸມຊົນຢູ່ ສປປ ລາວ.

ການຄຸ້ມຄອງ ແລະ ການຈັດຕັ້ງປະຕິບັດ ບ້ວງສະໜອງທຶນສະເພາະ "ລົງທຶນແກ່ຊີວະນາໆພັນແລະຊຸມຊົນ" ແມ່ນຂຶ້ນກັບໜ່ວຍງານຄຸ້ມຄອງໂຄງການສິ່ງແວດລ້ອມ ແລະ ສັງຄົມ ຢູ່ ສປປລາວ, ເຊິ່ງມີຫ້ອງການຂອງ ຄສລ ຕັ້ງຢູ່ ອົງການວິທະຍາສາດ ເຕັກໂນໂລຊີ ແລະ ສິ່ງແວດລ້ອມ. ມີຄະນະກຳມະການຊີ້ນຳໂຄງການ ທີ່ມາຈາກຫຼາຍພາກສ່ວນ ທີ່ກ່ຽວຂ້ອງ ໂດຍແມ່ນທ່ານຮອງຫົວໜ້າ ອົງການວິທະຍາສາດ ເຕັກໂນໂລຊີ ແລະ ສິ່ງແວດລ້ອມ ເປັນປະທານ ເພື່ອໃຫ້ການຊີ້ນຳ ທາງດ້ານນະໂຍບາຍ ແລະ ເຕັກນິກ.

## ການຍື່ນບົດສະເໜີ ແລະ ບ່ອນຂໍຂໍ້ມູນເພີ່ມເຕີມ

ບົດສະເໜີສາມາດຍື່ນໄດ້ທຸກເວລາລັດຖະການ. ບົດສະເໜີສຸດທ້າຍຢ່າງໜ້ອຍ ຕ້ອງເຮັດຕາມໜຶ່ງໃນແບບຟອມຄຳຮ້ອງມາດຕະຖານຂອງໂຄງການ ຊຶ່ງມີດັ່ງນີ້:

☞ ຄຳຮ້ອງຂໍທຶນຊ່ວຍເຫຼືອລ້າແກ່ຊຸມຊົນຂະໜາດນ້ອຍ (ບໍ່ເກີນ 10.000 ໂດລາ);

☞ ຄຳຮ້ອງ ຂໍທຶນຊ່ວຍເຫຼືອລ້າສຳລັບຄຸ້ມຄອງປ່າສະຫງວນ ຂະໜາດນ້ອຍ (ບໍ່ເກີນ 10.000 ໂດລາ);

☞ ຄຳຮ້ອງ ຂໍທຶນຊ່ວຍເຫຼືອລ້າ ຈາກບ້ວງ "ລົງທຶນແກ່ ຊີວະນາໆພັນ ແລະ ຊຸມຊົນ" ຂະໜາດໃຫຍ່ (ເກີນ 10.000 ໂດລາ).

ແບບຟອມຄຳຮ້ອງດັ່ງກ່າວສາມາດຂໍໄດ້ທີ່ໂຄງການ ແລະ ສາມາດເອົາໄດ້ ຈາກເວັບໄຊຂອງ ກປສ: http://www.laoepf.org.la/lens.
ເພື່ອຍື່ນບົດສະເໜີ ຫຼື ຢາກສອບຖາມຂໍ້ມູນເພີ່ມ ສາມາດຕິດຕໍ່ໄດ້ທີ່:

ກອງທຶນປົກປັກຮັກສາສິ່ງແວດລ້ອມ
ໂຄງການສິ່ງແວດລ້ອມ ແລະ ສັງຄົມ ຢູ່ ສປປ ລາວ
ຊັ້ນທີ່ ໜຶ່ງ, ຕຶກ ອວຕສ, ຖະໜົນ ນາໄຊດ່ຽວ
ນະຄອນຫຼວງວຽງຈັນ, ສປປລາວ, ຕູ້ ປນ: 7647
ໂທລ: 021 251947, ແຟັກ: 021 251946
http://www.laoepf.org.la/lens